ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ...2902/ກສຂ

ຊຽງຂວາງ, ວັນທີ...30...ກໍລະກົດ 2026

## ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

1. ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງຊຽງຂວາງ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະທີ່ດຳເນີນ ກິດຈະການກໍ່ສ້າງ ແລະ ສ້ອມແປງຊົນລະປະທານ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ການກໍ່ສ້າງໂຄງການຊົນລະປະທານ ທີ່ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ ປະຈຳປີ 2026 ຈຳນວນ 01 ໂຄງການ ຄື: ໂຄງການກໍ່ສ້າງຟື້ນຟູ-ສ້ອມແປງຊົນລະປະທານຫ້ວຍຫົກ, ບ້ານຫ້ວຍຫົກ, ບ້ານຫ້ວຍຄ້າງ, ເມືອງໜອງແຮດ;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບວຽກງານການກໍ່ສ້າງ-ສ້ອມແປງຊົນລະປະທານ;
4. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ, ໃນມູນຄ່າ 1.000.000 ກີບ ໄດ້ທີ່ພະແນກກະສິກຳ ແລະ ສິ່ງແວດລ້ອມ (ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ) ຕັ້ງຢູ່ບ້ານລີ່ ເມືອງແປກ ແຂວງຊຽງຂວາງ, ເບີໂທ 020 2303 5555, 020 7777 1009 ແລະ ພະແນກການເງິນ ແຂວງຊຽງຂວາງ (ຂະແໜງຈັດຊື້-ຈັດຈ້າງ), ເຊິ່ງຈະໄດ້ຂາຍຊອງປະມູນເລີ່ມແຕ່ ວັນທີ 31 ກໍລະກົດ 2026 ຫາ ວັນທີ 13 ສິງຫາ 2026 (ໃນໂມງລັດຖະການ);
5. ຊອງປະມູນຈະຕ້ອງສົ່ງກ່ອນ ຫຼື ກ່ອນມື້ເປີດຊອງ ຂອງວັນທີ 14 ສິງຫາ 2026 ເວລາ 9:00 ໂມງ ທີ່ຫ້ອງປະຊຸມຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ (ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມ ທຸກຍາກ) ຕັ້ງຢູ່ບ້ານລີ່ ເມືອງແປກ ແຂວງຊຽງຂວາງ, ເບີໂທ 020 2303 5555, 020 7777 1009, ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ, ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ການເປີດຊອງປະມູນຈະໄດ້ເປີດຢ່າງເປັນທາງການໂດຍຊ້ອງໜ້າຂອງຄະນະກຳມະການປະມູນ, ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນທີ່ມີຄວາມສົນໃຈເຂົ້າຮ່ວມ ໃນເວລາ 10:00 ໂມງ ຂອງວັນທີ 14 ສິງຫາ 2026;
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

**ດັ່ງນັ້ນ,** ຈຶ່ງໄດ້ແຈ້ງເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າພະແນກ

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ

ທອງທອງ ພົມມະສານ